ສາລີອາຫານສັດ ເປັນພືດເສດຖະກິດ ທີ່ສຳຄັນຊະນິດໜຶ່ງຂອງ ປະເທດລາວ ເປັນພືດທີ່ຈະເລີນເຕີບໂຕໄດ້ດີ ໃນເກືອບທຸກສະພາບນິຍົມປູກກັນຫຼາຍໃນທຸກພາກ ໃນລະດູຝົນ, ແລະ ສ່ວນລະດູແລ້ງປູກຢູ່ ເຂດທົ່ງພຽງພາກກາງ ທີ່ມີລະບົບນ້ຳຊົນລະປະທານ.

## ສະພາບແວດລ້ອມທີ່ເໝາະສົມ

ສາລີອາຫານສັດ ສາມາດປູກໄດ້ດີ ກັບດິນທີ່ມີສະພາບເປັນດິນຊາຍແກມຕົມມີຄວາມເປັນກົດ-ດ່າງຢູ່ລະຫວ່າງ 5.5-8, ອຸນຫະພູມທີ່ເໝາະສົມ 27-30 ອົງສາ.

## ລະດູປູກ

ລະດູຝົນປູກໃນລະຫວ່າງກາງ ຫາທ້າຍເດືອນເມສາ, ລະດູແລ້ງກາງຫາທ້າຍເດືອນພະຈິກ.

## ແນວພັນສາລີທີ່ແນະນຳໃຫ້ປູກ

ແນວພັນສາລີອາຫານສັດ ທີ່ແນະນຳໃຫ້ປູກ ໃນປະຈຸບັນ ເປັນແນວພັນ ລູກປະສົມ LVN10 ແລະ LVN14 ແມ່ນຜະລິດຢູ່ປະເທດຫວຽດນາມ ໃຫ້ຜົນຜະລິດສູງ 4-6 ໂຕນ/ເຮັກຕາ





## ການກຽມດິນປູກ

ລະດູຝົນຫຼັງຈາກຝົນຕົກ 1 ຫາ 2 ຄັ້ງແລ້ວ ຄວນໄຖດິນ 1 ຫາ 2 ຄັ້ງ ແລະ ຄາດປັບໜ້າດິນໃຫ້ຮາບພຽງດີ. ລະດູແລ້ງເຂດທີ່ມີຊົນລະປະທານ ຫຼັງຈາກເກັບກ່ຽວເຂົ້ານາປີແລ້ວ ຕ້ອງໄດ້ໄຖ ແລະ ຄາດ ໃນເວລາດິນຍັງມີຄວາມຊຸ່ມຢູ່ ແລະ ປັບໜ້າດິນໃຫ້ຮາບພຽງດີ.

## ວິທີປູກ

ໄລຍະຫ່າງຂອງແຖວ ຫາແຖວ 75 ຊມ, ໄລຍະຫ່າງ ລະຫວ່າງຕົ້ນ 25 ຊມ, ຖ້າເປັນດິນແຄມເຊທີ່ມີຄວາມອຸດົມສົມບູນດີໃຫ້ປູກ 80x40 ຊມ, ຂຸມເລິກ 3-4 ຊມ ປູກຂຸມລະ 2 ເມັດ, ຫຼັງຈາກປູກໄດ້ 7-10 ວັນ ໃຫ້ປູກສ້າມຄືນໃສ່ຂຸມທີ່ບໍ່ແຕກງອກຂຶ້ນມາ ແລະ ປະມານ 2 ອາທິດ ໃຫ້ຖອນແຍກຕົ້ນທີ່ອ່ອນແອອອກ ໃຫ້ເຫຼືອຂຸມລະ 1 ຕົ້ນ. ປູກດ້ວຍມືໃຊ້ແນວພັນ 15 ກິໂລ ຫາ 18 ກິໂລ ຕໍ່ເຮັກຕາ. ຖ້າປູກດ້ວຍເຄື່ອງຈັກຢອດເມັດໃຊ້ແນວພັນ 20 ຫາ 25 ກິໂລຕໍ່ເຮັກຕາ.



## ວິທີໃສ່ຝຸ່ນ

ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ 2 ຫາ 3ໂຕນ/ຮຕ ໃນເວລາໄຖຫຼືຄາດ. ຫຼັງຈາກປູກໄດ້ 15 ຫາ 20 ວັນ ໃສ່ຝຸ່ນສູດ 15-1515 ຈຳນວນ 150ກິໂລ/ຮຕ ຝັງໃສ່ໃຫ້ຫ່າງຈາກຕົ້ນ 15 ຊມ, ພ້ອມທັງເສຍຫຍ້າ ແລະ ຄູນດິນໃສ່ຕົ້ນສາລີໃຫ້ເປັນຮ່ອງ ທາງກາງຂອງແຖວສາລີ. ຫຼັງຈາກປູກໄດ້ 40 ຫາ 45 ວັນ (ກ່ອນອອກດອກ) ໃສ່ຝຸ່ນສູດ 46-0-0 ຈຳນວນ 100 ກິໂລ/ຮຕ ຝັງໃສ່ໃຫ້ຫ່າງຈາກຕົ້ນ 20 ຊມ (ຈຳນວນຝຸ່ນທີ່ໃສ່ແມ່ນໃຫ້ເບິ່ງຄວາມເໝາະສົມອີງໃສ່ຕົ້ນສາລີ ແລະ ຄວາມອຸດົມສົມບູນຂອງດິນ)

## ວິທີໃສ່ນ້ຳ

ສາລີຕ້ອງການນ້ຳ ໃນລະດູການໜຶ່ງ ປະມານ 300 ແມັດກ້ອນ ລະດູຝົນ ຖ້າຝົນບໍ່ຕົກ ດິນແຫ້ງຄວນໃສ່ນ້ຳສາລີໂດຍສະເພາະໃນເວລາໃສ່ຝຸ່ນ ແລະ ເວລາສາລີອອກດອກ ຈຳເປັນຕ້ອງໄດ້ໃສ່ນ້ຳ.



## ການປ້ອງກັນ ແລະກຳຈັດສັດຕູພືດ

ຖາງຫຍ້າ ບໍລິເວນປູກສາລີອອກໃຫ້ໝົດ ເພື່ອບໍ່ໃຫ້ເປັນບ່ອນລີ້ຊ່ອນ ແລະ ຂະຫຍາຍພັນຂອງແມງໄມ້. ແມງໄມ້ທີ່ມັກທຳລາຍຕົ້ນສາລີແມ່ນ: ເພ້ຍ, ບົ້ງກັດລຳຕົ້ນ, ບົ້ງກັດໃບ, ບົ້ງເຈາະຝັກ, ຕັກກະແຕນ ແລະ ອື່ນໆ. ສຳລັບການກຳຈັດບົ້ງ ແຕ່ລະເຊົ້າຕ້ອງໄດ້ເລາະຂ້າບົ້ງດ້ວຍມື.





## ການເກັບກູ້

ສາລີແຕ່ລະແນວພັນ ມີອາຍຸເກັບກູ້ ທີ່ແຕກຕ່າງກັນແຕ່ກໍ່ມີຫຼາຍແນວພັນ ທີ່ມີອາຍຸເກັບກູ້ພ້ອມກັນ ທັງໝົດ ນີ້ກໍຂຶ້ນຢູ່ກັບຄວາມຊຸ່ມຂອງດິນ, ນ້ຳ, ອາກາດ. ກ່ອນການເກັບກູ້ຄວນສັງເກດເບິ່ງອາຍຸການເກັບກູ້ ຂອງສາລີ, ເບິ່ງສີໃບ, ເບິ່ງສີຝັກ ຈາກສີຂຽວກາຍເປັນສີເຫຼືອງ ແລະ ບາງແນວພັນຝັກຈະກົ້ມລົງລຸ່ມຈຶ່ງສາມາດເກັບກູ້ໄດ້.



## ວິທີເກັບມ້ຽນ

ຫຼັງຈາກເກັບກູ້ສາລີສຳເລັດແລ້ວ ຄວນມັດສາລີເປັນຈຸກ ແລະ ເອົາສາລີ ພາດໄວ້ຮາວ ກ້ອງຕາລ່າງເຮືອນບ່ອນທີ່ມີອາກາດລ່ວງດີ. ຖ້າມີລານຕາກສາລີ ກໍຍິ່ງເປັນການດີເພາະສາລີຈະແຫ້ງໄວ ບໍ່ຕົກໂມະ ບໍ່ມີເຊື້ອລາ ແລະ ສາມາດຂາຍໄດ້ລາຄາດີ.





## ການແກະເມັດ

ການແກະເມັດ ເມື່ອເວລາຝັກສາລີແຫ້ງດີແລ້ວ ໃຫ້ແກະເມັດດ້ວຍມື ຫຼື ແກະດ້ວຍເຄື່ອງຈັກ. ລາຄາເມັດສາລີແຫ້ງໃນປະຈຸບັນແມ່ນ 1400ກີບ / ກິໂລ; ລາຄາຝັກສາລີແຫ້ງ 900 ກີບ/ກິໂລ.

# ຂໍ້ແນະນຳ

# ປູກສາລີເພື່ອເປັນອາຫານສັດ

ມີນາ 2013



NTPC
Powering the Future

**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**
ພະແນກ ສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່